## ການກຽມດິນ

### ວິທີທີ່ 1 - ການເຮັດໜານຜັກ 2 ຊັ້ນ

- ກະກຽມໜານປູກໃຫ້ກວ້າງປະມານ 1 ແມັດ ແລະ ຍາວຕາມຕ້ອງການ
- ຊັ້ນທີ 1 ຂຸດເລິກປະມານ 10–15 ຊັງຕີແມັດ ແລະ ກອງໄວ້ຂ້າງໜານ
- ປະສົມດິນກັບເສດພືດປະມານ 30% (ເຊັ່ນ: ເປືອກຖົ່ວດິນແຫ້ງ ຫຼື ເຟືອງແຫ້ງ)
- ຈາກນັ້ນຂຸດຊັ້ນທີ 2 ລົງໄປອີກ 10–15 ຊັງຕີແມັດ ແລະ ທຸບດິນໃຫ້ແຕກລະອຽດ
- ປະສົມດິນກັບເສດພືດປະມານ 20% (ເຊັ່ນ: ເປືອກຖົ່ວດິນ ຫຼື ເຟືອງແຫ້ງ) ແລະ ໃສ່ປຸ໋ຍຊີວະພາບ 2 ກິໂລກຣາມ ຕໍ່ຕາແມັດ
- ພວນດິນຊັ້ນທີ່ 1 ໄປຖົມຊັ້ນທີ 2
- ປ່ອຍໃຫ້ດິນຕາກແດດປະມານ 7 ວັນ ກ່ອນນຳໃຊ້

### ວິທີທີ 2 - ການເຮັດໜານທົ່ວໄປ (ໜານຊັ້ນດຽວ)

- ກະກຽມໜານໃຫ້ກວ້າງປະມານ 1 ແມັດ ແລະ ຍາວຕາມຕ້ອງການ
- ຂຸດດິນໃຫ້ເລິກປະມານ 20 ຊັງຕີແມັດ
- ປະສົມດິນກັບເສດພືດປະມານ 20% ແລະ ຝຸ່ນປຸ໋ຍຊີວະພາບ 2 ກິໂລກຣາມ ຕໍ່ຕາແມັດ
- ພວນດິນກັບສ່ວນປະສົມເຂົ້າກັນດີ
- ປ່ອຍໃຫ້ດິນຕາກແດດປະມານ 7 ວັນ ກ່ອນໃຊ້ງານ






**ຜູ້ແຕ່ງ:**

- **ທ່ານ ຊຸ່ຫໍ່ ຊາວຈາ,** ຜູ້ປະສານງານໂຄງການ, <icdienglish9@gmail.com>
- **ທ່ານ ນາງ ສົດສຸດາ ອຸດົມສຸກ,** ຜູ້ຊ່ວຍໂຄງການ, <Osodsuda@yahoo.com>



- **ວັນທີເຜີຍແຜ່: ມີນາ 2026**


## ອຸປະກອນ

- ຈົກ, ຊ້ວນ, ພ້າ, ຄຸ, ບົວ, ບັ້ງສີດ, ຄາດ, ຜ້າຢາງ, ຜ້າກັນແສງ

## ການແປງໜານຜັກ (ສອງຄັ້ງຕໍ່ປີ)

**ຄັ້ງທີ 1 (ລະດູຝົນ ແຕ່ເດືອນພຶດສະພາ ຫາ ເດືອນຕຸລາ)**

ຄວເຮັດໜານສວດ ຫຼື ສູງກວ່າໜ້າດິນ 15–20 ຊັງຕີແມັດ ເພື່ອເປັນການລະບາຍນ້ຳ ແລະ ຄວາມຊຸ່ມໄດ້ສູງ

**ຄັ້ງທີ 2 (ລະດູແລ້ງ ແຕ່ເດືອນພະຈິກ ຫາ ເດືອນເມສາ)**

- ຄວນເຮັດໜານພຽງໜ້າດິນ ຫລື ຫລຸບລົງ 1-2 cm ເພື່ອເປັນການປະຫຍັດນ້ຳ ແລະ ຮັກສາມຄວາມຊຸ່ມໄວ້ດົນ.

### ຜົນປະໂຫຍດຂອງວິທີການເຫຼົ່ານີ້

- ການປະສົມດິນກັບເສດພືດ ແລະ ຝຸ່ນປຸ໋ຍ ຈະຊ່ວຍເພີ່ມຄວາມອຸດົມສົມບູນ ແລະ ປັບປຸງໂຄງສ້າງຂອງດິນ. ດິນຜຸຜ່ຍຊ່ວຍໃຫ້ມີການຖ່າຍເທອາກາດ ແລະ ການລະບາຍນ້ຳໄດ້ດີ ແລະ ຍັງຊ່ວຍຊະລໍການເຕີບໂຕຂອງວັດຊະພືດອີກດ້ວຍ.
- ການພວນດິນປະໄວ້ໃຫ້ຖືກແສງແດດເປັນເວລາ 2-3 ວັນກ່ອນນຳໃຊ້ ຈະຊ່ວຍກຳຈັດສັດຕູພືດ ແລະ ແກ່ນວັດຊະພືດ.
- ການປັບປຸງດິນເປັນສິ່ງທີ່ຈຳເປັນ ເພື່ອເພີ່ມປະສິດທິພາບການລະບາຍນ້ຳ, ເກັບກັກນ້ຳ, ລະບາຍຄວາມຊຸມຊື່ນທີ່ສູງເກີນ ແລະ ຮັກສາຄວາມຄວາມຊຸ່ມຊື່ນຂອງດິນໃຫ້ພຽງພໍ.


www.ali-sea.org

**ທີມງານອາລີເຊຍ**

- ຜູ້ປະສານງານລະດັບພາກພື້ນ: **ລູຊີ ເຣໂນ** <reynaud@gret.org>
- ກອງເລຂາອາລີເຊຍປະຈຳລາວ: **ສຸຕິມາ ບຸດວິເສດ** <soutima2506@gmail.com>



ສະໜັບສະໜູນໂດຍ:

Agroecology and Safe Food System Transitions

ປະສານງານໂດຍ:

GRET, cirad

ສະໜັບສະໜູນທຶນໂດຍ:

In partnership with RÉPUBLIQUE FRANÇAISE, AFD; Co-funded by the European Union; FONDS FRANÇAIS POUR L'ENVIRONNEMENT MONDIAL

ເອກະສານນີ້ສ້າງຂຶ້ນໂດຍການສະໜັບສະໜູນດ້ານການເງິນຈາກອົງການຝຣັ່ງເພື່ອການພັດທະນາ (AFD), ສະຫະພາບເອີຣົບ (EU) ແລະ ກອງທຶນຝຣັ່ງເພື່ອສິ່ງແວດລ້ອມໂລກ (FFEM). ທັດສະນະທີ່ສະແດງອອກໃນເອກະສານສະບັບນີ້ຈະບໍ່ຖືວ່າເປັນການສະແດງທັດສະນະທີ່ເປັນທາງການຂອງ ອົງການ AFD, EU ແລະ FFEM.



ALiSEA
AGROECOLOGY LEARNING ALLIANCE IN SOUTH EAST ASIA




ແຜ່ນພັບດ້ານເຕັກນິກວິຊາການ

# ເຕັກນິກການປູກຜັກແບບຍືນຍົງ

ສະຖານທີ່ຈັດຕັ້ງປະຕິບັດ
ເມືອງ ແປກ, ແຂວງ ຊຽງຂວາງ, ສປປ ລາວ

| ລະບົບນິເວດກະສິກຳ: | | | | |
|---|---|---|---|---|
| ເຂດ | ກິດຈະກຳຫຼັກ | ສະພາບອາກາດ | ປະລິມານນ້ຳຝົນ | ອຸນຫະພູມ |
| ທົ່ງພຽງ | ເຂົ້າ, ສາລີ, ຜັກອິນຊີ ແລະ ລ້ຽງສັດ | ເຂດຮ້ອນຊຸ່ມຕາມລະດູການ (ລະດູຝົນ: ເດືອນມິຖຸນາ-ຕຸລາ) | ~1500–2000 ມມ/ປີ | ອຸນຫະພູມສະເລ່ຍສູງສຸດ: 23°C - ຕ່ຳສຸດ: 14°C |

## ການປູກພືດແບບປະສົມປະສານ

ການປູກພືດແບບປະສົມປະສານ ແມ່ນວິທີການປູກແບບຍືນຍົງ ທີ່ສົ່ງເສີມໃຫ້ໄດ້ຮັບຜົນຜະລິດສູງຂຶ້ນ, ດິນມີຄຸນນະພາບດີຂຶ້ນ ແລະ ຊ່ວຍຄວບຄຸມສັດຕູພືດຕາມທຳມະຊາດ. ໂດຍເປັນການປະສົມປະສານທີ່ສາມາດນຳໄປປະຕິບັດໄດ້ຈິງ ແລະ ມີຕົ້ນທຶນຕ່ຳ ເພື່ອສະໜັບສະໜູນການກະສິກຳທີ່ທົນທານ ແລະ ມີປະສິດທິພາບ.

## ການຫວ່ານແກ່ນທົ່ວໄປ (ລະດູຝົນ)



ໝາຍເຖິງການຫວ່ານແນວພັນລົງໜານຜັກ ຫຼື ສວນ ໂດຍກົງ. ສຳລັບແນວພັນທີ່ມີຂະໜາດນ້ອຍ ຄວນໃຊ້ກະປ໋ອງທີ່ມີຝາປິດ ແລະ ເຈາະຮູນ້ອຍໆໃສ່ຝາ ເພື່ອຊ່ວຍໃຫ້ການກະຈາຍແນວພັນເປັນໄປຢ່າງສະໝ່ຳສະເໝີ. ຫຼັງຈາກຫວ່ານແລ້ວ, ໃຫ້ຖົມດ້ວຍຝຸ່ນຄອກ ຫຼື ດິນບາງໆ, ແລ້ວຄ່ອຍໆຫົດນ້ຳໃສ່ ຈົນກວ່າດິນຈະຊຸ່ມ.

## ການໃສ່ຝຸ່ນ (ລະດູແລ້ງ)



ການໃສ່ຝຸ່ນຄວນອີງຕາມຄວາມອຸດົມສົມບູນຂອງດິນໃນແຕ່ລະພື້ນທີ່ ແລະ ປະຕິບັດຕາມອັດຕາທີ່ແນະນຳສຳລັບການໃຊ້ໃນສວນ. ໂດຍທົ່ວໄປແລ້ວ ຝຸ່ນອິນຊີຈະໃສ່ສອງຄັ້ງຕໍ່ໜຶ່ງຮອບການປູກຜັກ ໃນອັດຕາ 1 ກິໂລກຣາມຕໍ່ 2 ຕາແມັດ. ການໃສ່ຄັ້ງທຳອິດແມ່ນຊ່ວງເມື່ອຕົ້ນພືດອອກສອງໃບທຳອິດ ແລະ ການໃສ່ຄັ້ງທີສອງແມ່ນຊ່ວງເມື່ອຕົ້ນພືດເຕີບໂຕເຕັມທີ່.

## ການປົກຄຸມໜານ



ຫຼັງຈາກປູກແລ້ວ, ໃຫ້ຄຸມດິນດ້ວຍເຟືອງ, ຫຍ້າແຫ້ງ ຫຼື ໃບພືດສົດຕະກຸນຖົ່ວ ປົກຄຸມໜານໃຫ້ໜາພໍປະມານ. ວິທີນີ້ຈະຊ່ວຍຫຼຸດຜ່ອນການເກີດຂອງວັດສະພືດ, ປ້ອງກັນບໍ່ໃຫ້ດິນຟົ້ງຕິດໃສ່ໃບຜັກ ແລະ ຮັກສາຄວາມຊຸ່ມຊື່ນຂອງດິນອີກດ້ວຍ. ການຄຸມດິນແມ່ນວິທີທີ່ງ່າຍດາຍ ແລະ ມີປະສິດທິພາບໃນການປ້ອງກັນ ແລະ ດູແລຮັກສາພືດຜົນ.

## ການປູກພືດໝູນວຽນ



ໝາຍເຖິງການປູກພືດຫຼາຍຊະນິດແຕກຕ່າງກັນປູກສະລັບກັນໃນແຕ່ລະລະດູການ. ການປູກພືດຊະນິດດຽວຊ້ຳໆ ຈະພາໃຫ້ເກີດສັດຕູພືດ ແລະ ພະຍາດຊຳເຮື້ອ ເຮັດໃຫ້ຕົ້ນພືດມີຄວາມສ່ຽງຕໍ່ການຖືກທຳລາຍຈາກແມງໄມ້ຫຼາຍຂຶ້ນ.

## ການປູກຜັກດ້ວຍການບົ່ງເບ້ຍ



ແມ່ນການຫວ່ານແນວພັນໃສ່ບ່ອນທີ່ໜຶ່ງ ແລ້ວຍ້າຍຕົ້ນກ້າໄປປູກໃນອີກສະຖານທີ່ໜຶ່ງ ໂດຍການໃຊ້ໄມ້ ຫຼື ເຄື່ອງມືນ້ອຍໆຈິ້ມເອົາຕົ້ນກ້າພ້ອມກັບດິນທີ່ຕິດຂຶ້ນມາກັບຮາກ. ວິທີນີ້ຈະຊ່ວຍໃຫ້ຕົ້ນພືດຕັ້ງຕົ້ນໄດ້ງ່າຍຂຶ້ນ ແລະ ສົ່ງເສີມການຈະເລີນເຕີບໂຕຂອງໃບຢ່າງແຂງແຮງ.

## ການໃຫ້ນ້ຳ



ຄວນປັບການໃຫ້ນ້ຳ ຕາມຄວາມເໝາະສົມແຕ່ລະສະພາບອາກາດ ເພື່ອໃຫ້ດິນມີຄວາມຊຸ່ມຊື່ນສະໝ່ຳສະເໝີ — ບໍ່ຄວນໃຫ້ດິນປຽກ ຫຼື ແຫ້ງຈົນເກີນໄປ. ກວດເບິ່ງຄວາມຊຸ່ມຂອງດິນວັນລະສອງຄັ້ງ. ໃນລະດູແລ້ງ, ຫົດນ້ຳໃນຕອນເຊົ້າ ແລະ ຕອນແລງ. ໃນລະດູຝົນ, ການຮົດນ້ຳວັນລະຄັ້ງກໍພຽງພໍແລ້ວ (ໃຊ້ໄດ້ສະເພາະກັບສວນຄົວເຮືອນເທົ່ານັ້ນ).

## ການປູກເປັນຂຸມ



ຂຸດເປັນຂຸມໆ ແລ້ວປູກຕົ້ນກ້າໃສ່ 1 ຫາ 3 ຕົ້ນ ໃນແຕ່ລະຂຸມ. ດ້ວຍການຫວ່ານແກ່ນ ຫລື ຍ້າຍໄປບົ່ງ ເຊິ່ງເໝາະກັບການປູກໃນພື້ນທີ່ ທີ່ກວ້າງ, ມີນ້ຳໜ້ອຍ ຫລື ອາດຂຸດຂຸມຕາມຫວ່າງກາງຂອງໜານຜັກກໍ່ໄດ້ ເຊິ່ງເປັນການນຳໃຊ້ພື້ນທີ່ໃຫ້ເກີດປະໂຫຍດສູງ

## ການເກັບກ່ຽວ



ການເກັບກ່ຽວແມ່ນຂຶ້ນຢູ່ກັບແຕ່ຊະນິດ ແລະ ຕາມອາຍຸຂອງມັນ. ຊ່ວງເວລາທີ່ຄວນເກັບກ່ຽວແມ່ນຕອນເຊົ້າໆ ຫຼື ຕອນແລງໆ ທີ່ອຸນຫະພູມຂ້ອນຂ້າງເຢັນ ແລະ ຄວນຫົດນ້ຳກ່ອນເກັບກ່ຽວ. ເພື່ອຮັກສາຜັກໃຫ້ສົດໄດ້ດົນຂຶ້ນ ບໍ່ຄວນຕັດຮາກອອກ ແລະ ໃຊ້ໃບຕອງຫໍ່ວາງໄວ້ໃນລວງຕັ້ງຂອງຜັກ, ບໍ່ຄວນເອົາຜັກໃສ່ແໜ້ນເກີນໄປຈະເຮັດໃຫ້ຜັກເກີດຄວາມຮ້ອນ ແລະ ເນົ່າເສຍໄດ້ງ່າຍ.